San Diego City Schools

Fact Sheet

ລະດູໃບໄມ້ລົ່ນ 2003

# ໂຄງການສຶກສາພິເສດສຳຫລັບເດັກຫ້ອງຕຽມອະນຸບານຮຸ່ນນ້ອຍ

ເຂດສຶກສາແຊນດິເອໂກ (SDCS) ໂຄງການສຶກສາພິເສດສຳຫລັບເດັກຫ້ອງຕຽມອະນຸບານຮຸ່ນນ້ອຍ ໃຫ້ການບໍຣິການເຂົ້າແຊກຊ່ອຍແຕ່ຕົ້ນ ແກ່ເດັກຜູ້ໄດ້ຮັບເງື່ອນໄຂເຂົ້າໂຮງຮຽນຕຽມອະນຸບານອາຍຸແຕ່ສາມປີ ຫາ ຫ້າປີ.

**ການສົ່ງມອບ:** ການສົ່ງມອບພວກເດັກອາຍຸຂັ້ນ–ຕຽມອະນຸບານ ເຂົ້າໂຄງການສຶກສາພິເສດນີ້ ອາດໄດ້ມອບໂດຍພໍ່ແມ່ ແລະ ພາກສ່ວນກ່ຽວຂ້ອງອື່ນໆ, ຮວມທັງ ຄູໂຮງຮຽນຕຽມອະນຸບານ, ນັກວິຊາການຝ່າຍແພດ, ຜູ້ຕາງໜ້າອົງການຊ່ວຍເຫລືອສັງຄົມ, ແລະ ອື່ນໆ. ການມອບສົ່ງນີ້ຕ້ອງໂທຣະສັບຫາຫ້ອງການສຶກສາພິເສດສຳຫລັບເດັກຮຸ່ນນ້ອຍ (SEEC) ໃນເລກໂທຣະສັບ (858) 490–8515.

**ການປະເມີນຜົນ:** ເພື່ອກຳນົດວ່າເດັກມີເງື່ອນໄຂພຽງພໍ ເຂົ້າໂຄງການສຶກສາພິເສດນີ້, ຕ້ອງໄດ້ຮວບຮວມເອົາຂ່າວຈາກແຫລ່ງຕ່າງໆ, ຮວມທັງ ຜົນຂອງ ການສຳຣວດກ່ຽວກັບການຫລິ້ນຂອງເດັກ ທີ່ທົດສອບໂດຍຄະນະສັງເກດການດ້ານການປະພຶດ (ນັກຈິດຕະວິທຍາ, ຜູ້ຊ່ຽວຊານດ້ານຝຶກແບບການປາກເວົ້າພາສາ, ດ້ານຝຶກແອບເຮັດວຽກງານ ແລະ ດ້ານຝຶກຫັດກາຍບໍຣິຫານ ສະເພາະ), ທົບທວນເບິ່ງລາຍງານການປິ່ນປົວທີ່ມີ ແລະ/ຫລື ການປ່ຽນແປງຕ່າງໆ, ສຳພາດພໍ່ແມ່ນັກຮຽນ(ຫລາຍຄົນ) ແລະ ຂຽນປະກອບຮາງໜັງສືປະເມີນຜົນເປັນທາງການ ແລະ/ຫລື ບໍ່ເປັນທາງການ.

**ການປະຊຸມ ແລະ ການໄດ້ຮັບເງື່ອນໄຂເຂົ້າໂຄງການສຶກສາສ່ວນບຸກຄົນ (IEP):** ການປະຊຸມນີ້ຈັດຂຶ້ນກັບພໍ່ແມ່ ເພື່ອແຈ້ງໃຫ້ພໍ່ແມ່ຮູ້ກ່ຽວກັບຜົນຂອງການປະເມີນ. ໂຄງການສຶກສາສ່ວນບຸກຄົນຈະໃຫ້ການສລຸບຜົນຂອງການປະເມີນ ແລະ ຄວາມກ້າວໜ້າໃນການຮຽນປະຈຸບັນ. ຖ້າເດັກມີເງື່ອນໄຂໃດນຶ່ງຂອງເຂດພິການ 13 ຢ່າງ ແລະ ຕ້ອງການຈຳເປັນຮັບການບໍຣິການໃນການສຶກສາພິເສດນັ້ນ, ໂຄງການສຶກສາສ່ວນບຸກຄົນ (IEP) ອາດໄດ້ຈັດຕັ້ງຂຶ້ນ ໂດຍປະກອບດ້ວຍພໍ່ແມ່ນັກຮຽນ ແລະ ພະນັກງານຂອງໂຮງຮຽນ. ຈັດເປົ້າໝາຍສະເພາະເຈາະຈົງ ໃນເຂດທີ່ນັກຮຽນແຕ່ລະຄົນແຈ້ງວ່າມີຄວາມຕ້ອງຈຳເປັນນັ້ນຂຶ້ນ.

**ໂຄງການ/ການບໍຣິການ:** ຂຶ້ນກັບຄວາມຕ້ອງການຈຳເປັນຂອງນັກຮຽນ, ການວາງເຂດບໍຣິການ ແລະ ການເລືອກໂຄງການນັ້ນ ຈະຖືກພິຈາຣະນາສເນີໃຊ້ ໂດຍຄະນະໂຄງການສຶກສາສ່ວນບຸກຄົນ (IEP). ທຸກໆໂຄງການຊ່ວຍເຫລືອ ແລະ ການບໍຣິການທີ່ສເນີໃຊ້ນັ້ນ ຕ້ອງເປັນການສຶກສາຫລວງ ບໍຣິການຟຣີ ແລະເໝາະສົມ (**Free And Appropriate Public Education [FAPE]**) ແລະ ຮັບປະກັນໃຫ້ເດັກໄດ້ຮຽນໃນສະພາບແວດລ້ອມທີ່ມີຄວາມຈຳກັດນ້ອຍທີ່ສຸດ (**Least Restrictive Environment [LRE]**). ໂຄງການອື່ນໆທີ່ມີໃຫ້ພວກເດັກຕຽມອະນຸບານເລືອກນັ້ນມີ:

- **Designated Instruction and Service: (DIS)** ການບໍຣິການນີ້ຮວມມີທັງ ການຝຶກແບບດ້ານການປາກເວົ້າ ແລະ/ຫລື ຝຶກແອບເຮັດວຽກງານບາງຢ່າງ, ການຫັດກາຍບໍຣິຫານ (APE), ແລະ ອື່ນໆອີກ.
- **Preschool Language Groups: (PLG)** ນັກຊ່ຽວຊານຜູ້ຝຶກແອບດ້ານການປາກເວົ້າພາສາ ໃຫ້ການສິດສອນທີ່ເອົາໃຈໃສ່ເຂັ້ມງວດເປັນກຸ່ມນ້ອຍໆ ສຳຫລັບພວກເດັກນ້ອຍທີ່ຮຽນຊ້າທາງດ້ານການຕິດຕໍ່ປາກເວົ້າ ແລະ/ຫລື ທາງດ້ານສັງຄົມ.
- **ການຮວມເຂົ້າ:** ການຮວມແຫລ່ງຊ່ຽວຊານ ກັບຄູສອນເດັກໂຄງການສຶກສາພິເສດໃນຫ້ອງຕຽມອະນຸບານ, ໄດ້ປະສານງານການບໍຣິການຊ່ວຍເຫລືອ, ແລະ ກຳກັບຄວາມກ້າວໜ້າຂອງພວກເດັກ.
- **ຫ້ອງຮຽນພິເສດ: (SDC)** ຫ້ອງຮຽນພິເສດຫລາຍຊະນິດມີໄວ້ ເພື່ອໃຊ້ຊະນິດການສິດສອນ ແລະ ຫລັກສູດການຮຽນຕ່າງໆ ໃຫ້ຖືກຕ້ອງກັບຄວາມຕ້ອງຂອງນັກຮຽນ.

**ການຜ່ານຂ້າມ:** ລະຍະປີຮຽນທີ່ເດັກຍ່າງເຂົ້າອາຍຸ ຫ້າປີນັ້ນ, ຕ້ອງໄດ້ວາງແຜນ ເພື່ອການຜ່ານຂ້າມຂອງເດັກຂັ້ນ. ໂດຍຜ່ານອະນຸຍາດຈາກພໍ່ແມ່, ຂ່າວຂອງການປະເມີນຜົນນັ້ນ ຕ້ອງໄດ້ເຮັດໃໝ່. ການປະຊຸມໂຄງການສຶກສາສ່ວນບຸກຄົນ (IEP) ຕ້ອງໄດ້ຈັດຂຶ້ນ ແລກປ່ຽນຂ່າວການປະເມີນຜົນ, ແລະ ຈັດເປົ້າໝາຍ ແລະ ຈຸດປະສົງຕ່າງໆຂຶ້ນ. ທາງເລືອກສັບຊ້ອນເຂົ້າໂຮງຮຽນອະນຸບານ ຈະໄດ້ທຳການພິຈາຣະນາໃນເວລານີ້ ແລະ ການບໍຣິການຊ່ວຍເຫລືອ ແລະ/ຫລື ໂຄງການຮຽນຕ່າງໆກໍ່ຈະໄດ້ແຈ້ງໃຫ້ຊາບ.

## ຂໍ້ສລຸບ

- ໂຄງການສຶກສາພິເສດສຳຫລັບເດັກຫ້ອງກຽມອະນຸບານ (SEEC) ມີໂຄງການເລືອກຮຽນດຳເນີນຕໍ່ໄປ ເພື່ອໃຫ້ຖືກກັບຄວາມຕ້ອງການພິເສດສຳຫລັບພວກນັກຮຽນຕຽມອະນຸບານຜູ້ທີ່ໄດ້ຮັບເງື່ອນໄຂເຂົ້າຮຽນນັ້ນ.
- ໂຄງການ ແລະ ການບໍຣິການນີ້ມີໄວ້ໃຫ້ ແລະ ຕັ້ງຢູ່ທົ່ວເຂດສູນກາງສຶກສາ.
- ຈະໄດ້ໃຊ້ຫລັກສູດຂອງຫ້ອງຕຽມອະນຸບານອັນທີ່ເໝາະສົມນັ້ນ.
- ເປີດໂອກາດໃຫ້ເຂົ້າຮ່ວມໃນການວາງແຜນສຳຫລັບພວກນັກຮຽນຕຽມອະນຸບານ.
- ພວກນັກຮຽນອາດຈະໄດ້ຮັບການບໍຣິການຊ່ວຍເຫລືອຈາກໂຮງຮຽນກຽມອະນຸບານຂອງຊຸມຊົນ, ເຊັ່ນວ່າ **Head Start,** ໂຮງຮຽນກຽມອະນຸບານຂອງຣັດ, ສູນກາງລ້ຽງດູຮັກສາເດັກ ແລະ ໂຮງຮຽນຕຽມອະນຸບານຂອງເອກຊົນ.
- ຂໍຊຸກຍູ້ໃຫ້ພໍ່ແມ່ນັກຮຽນເຂົ້າມາຮ່ວມພົວພັນ.
- ເພື່ອ ສົ່ງມອບເດັກໃຫ້ໂຄງການນີ້, ຂໍໃຫ້ໂທຣະສັບໄປຫາໂຄງການ **SEEC** ທີ່ (858) 490–8515.

*ອະພິບັນທະນາການພິມຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: **Special Education Early Chilhood (SEEC) Peschool Program: (858) 490-8500**
**Media inquires: (619) 725-5578**
**www.sandi.net**

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 138,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລິຟໍເນັຍ, ມີໂຮງຮຽນຫລາຍກວ່າ 200 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 18,800 ຄົນ.) ສູນກາງສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄໝ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄູອາຈານ, ແລະ ຊຸມຊົນ."

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.